**ບົດຮຽນໂຮງຮຽນວັນອາທິດ**
**ວັນອາທິດທີ 31 ຕຸລາ 2021 (10-31-2021)**

---

## ຄວາມໝັ້ນໃຈໃນທ່າມກາງຄວາມຂັດແຍ້ງ

*ແມ່ນຫຍັງ ຄືສິ່ງທີ່ນ້ອຍທີ່ສຸດ ທີ່ທ່ານໄດ້ເຫັນໃຜຜູ້ນຶ່ງຕໍ່ສູ້ເພື່ອຄອບຄອງ?*

**ຈຸດສໍາຄັນໃນບົດຮຽນ:** ຈົ່ງໄວ້ວາງໃຈໃນພຣະເຈົ້າເມື່ອຄວາມຂັດແຍ້ງຂັດຂວາງຄວາມສໍາພັນຂອງທ່ານ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້າພະເຈົ້າໄດ້ຮຽນຮູ້ເຣື່ອງການແລ່ນເຮືອໃບ(ຂີ່ແລະບັງຄັບເຮືອ)ຕອນຍັງນ້ອຍ. ໃນເມື່ອຂ້າພະເຈົ້າຄິດເຖິງການແລ່ນເຮືອ, ຂ້າພະເຈົ້າຄິດເຫັນຄໍາເວົ້າຄໍານຶ່ງ: **ຄວາມກົດດັນ**. *"ຕັ້ງແຕ່ເວລາທີ່ທ່ານຂຶ້ນເຮືອໃບລົມຈົນເຖິງເວລາທ່ານໄປເຖິງຝັ່ງ, ທ່ານກໍາລັງຈັດການກັບຄວາມຕຶງຄຽດ (ກົດດັນ) ຢູ່ສເມີ."*

- ຄວາມກົດດັນໃນການດຸ່ນດ່ຽງ (ຊັ່ງຊາ) ເຮືອໃບຂນະທີ່ທ່ານເຄື່ອນຍ້າຍນໍ້າໜັກຂອງຮ່າງກາຍຂອງທ່ານ.
- ຄວາມກົດດັນກ່ຽວກັບກະແສນໍ້າທີ່ກະທົບກັບຫາງເສືອ (ຫາງເຮືອທີ່ຄວບຄຸມທິດທາງ).
- ຄວາມກົດດັນຂອງຄວາມເຄັ່ງຕຶງຂອງເຊືອກທີ່ສໍາຄັນຂອງເຮືອຢູ່ໃນມືຂອງທ່ານ.

ດັ່ງດຽວກັບການແລ່ນເຮືອ, ພວກເຮົາກໍາລັງຈັດການກັບຄວາມກົດດັນຢູ່ສເມີໃນຊີວິດ. **ຕົວຢ່າງ:**

- ຄວາມກົດດັນເຣື່ອງເສຖກິຈເງິນຄໍາ.
- ຄວາມກົດດັນໃນການໂຕ້ຕອບກັບຂ່າວສານ (ໂທຣະທັດ, ໜັງສືພິມ, ສື່ມວນຊົນ, ແລະ ຕໍ່ໆໄປ ...)
- ຄວາມກົດດັນໃນການຮັກສານິສັຍທີ່ດີຕໍ່ສຸຂພາບ.

ແຕ່ວ່ານຶ່ງໃນຄວາມກົດດັນທີ່ຍາກທີ່ສຸດທີ່ພວກເຮົາຈໍາເປັນຕ້ອງຈັດການກັບມັນແມ່ນຄວາມກົດດັນດ້ານຄວາມສໍາພັນ. ພວກເຮົາບໍ່ສາມາດທີ່ຈະຫຼີບໜີຈາກມັນໄດ້. ຄວາມກົດດັນໃນບາງຄວາມສໍາພັນອາດຈະຖືກກະຕຸ້ນເໝືອນດັ່ງກະແສ ນໍ້າທີ່ໄຫຼຢ່າງໝັ້ນຄົງເປັນເວລາດົນນານ. ຄວາມກົດດັນອື່ນ: ຢູ່ໆກໍອອກມາຈາກບ່ອນໃດບ່ອນນຶ່ງໂດຍກະທັນຫັນຄືກັນກັບລົມພາຍຸແຮງ. ສະນັ້ນໃຫ້ພວກເຮົາພາກັນມາສຶກສາເບິ່ງ ເຄັດລັບ (ຂໍ້ແນະນໍາ) ບາງຢ່າງຈາກອັບຣາມເພື່ອເບິ່ງວ່າລາວໄດ້ "ແລ່ນເຮືອ" ໃນຄວາມສໍາພັນຂອງລາວໂດຍວິທີໃດ?

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. ປະຖົມມະການ 13:5-8

*5 ໂລດຜູ້ເດີນທາງຮ່ວມໄປກັບອັບຣາມກໍມີ ຝູງແກະ ຝູງແບ້ ຝູງງົວ ຄວາຍ ແລະຜ້າເຕັນຈໍານວນຫຼາຍ. 6-7 ເມື່ອເປັນເຊັ່ນນີ້*
*ຄົນລ້ຽງສັດຂອງ ອັບຣາມແລະໂລດຈຶ່ງຜິດຖຽງກັນ ເພາະບໍ່ມີທົ່ງຫຍ້າລ້ຽງສັດພຽງພໍ ເພື່ອໃຫ້ເຂົາທັງສອງຝ່າຍຢູ່ຮ່ວມກັນໄດ້*
*ໃນຄາວນັ້ນຊາວການາອານແລະຊາວເປຣິຊີ ກໍໄດ້ອາໄສຢູ່ທີ່ນັ້ນແລ້ວ. 8 ດັ່ງນັ້ນອັບຣາມຈຶ່ງເວົ້າກັບໂລດວ່າ, "ເຮົາທັງສອງ*
*ກໍເປັນພີ່ນ້ອງກັນ ຂໍຢ່າໃຫ້ຄົນຂອງເຈົ້າ ແລະຄົນຂອງຂ້ອຍຜິດຖຽງກັນເລີຍ.*

ຕາມທີ່ພວກເຮົາໄດ້ເຫັນໃນບົດຮຽນອາທິດແລ້ວນີ້, ອັບຣາມໄດ້ສະແດງໃຫ້ເຫັນການຂາດຄວາມໄວ້ວາງໃຈໃນເມື່ອລາວໄດ້ນໍາພາຄອບຄົວຂອງລາວໄປຍັງປະເທດເອຢິບ. ເຖິງປານນັ້ນ,ໃນລະຍະພັກເຊົານັ້ນ, ພຣະເຈົ້າຊົງໄດ້ອະນຸຍາດ ໃຫ້ອັບຣາມ

ໄດ້ຊັບສົມບັດອັນມັ່ງຄັ່ງສົມບູນ. ໃນເມື່ອອັບຣາມອອກຈາກເອຢິບແລະທອນກັບຄືນມາສູ່ການາອານ, ລາວໄດ້ກັບມາດ້ວຍຊັບສົມບັດຫຼາຍກວ່າເວລາຈາກໄປ-ທັງໝົດຫຼາຍແທ້ໆ! ແລະ ໂລດ ຫຼານຊາຍຂອງລາວກໍ່ເຊັ່ນດຽວກັນ. ຊັບສົມບັດທັງສອງຝ່າຍໂຮມກັນໄດ້ເຮັດໃຫ້ການເດີນທາງສາຍດຽວກັນເປັນການຍາກ. ນີ້ພາໃຫ້ເກີດຄວາມຂັດແຍ້ງລະຫວ່າງຄົນລ້ຽງສັດຂອງທັງສອງຝ່າຍ (ຂໍ້ 7). ມັນເປັນຄວາມຂັດແຍ້ງແບບ **"ສົງຄາມສນາມຫຍ້າ"**.

*ແມ່ນຫຍັງເປັນບາງສິ່ງ ທີ່ເຮັດໃຫ້ຄວາມຂັດແຍ້ງຮ້າຍແຮງຂຶ້ນກວ່າເກົ່າ ໃນວັທນະທັມຂອງພວກເຮົາ?*

ທ່ານຄົງຈະມີຄວາມຮູ້ສຶກວ່າຄວາມຂັດແຍ້ງໄດ້ຮຸນແຮງຂຶ້ນ.ໃນຖານະເປັນຜູ້ນຳຂອງຄອບຄົວທີ່ໃຫຍ່ຫຼວງ, ອັບຣາມມີທາງເລືອກ: ລາວສາມາດບໍ່ສົນໃຈກັບຂໍ້ຂັດແຍ້ງນັ້ນ, ຫຼືລາວສາມາດປະເຊີນໜ້າກັບມັນໄດ້. ລາວໄດ້ເລືອກເອົາການປະເຊີນໜ້າກັບມັນ. ອັບຣາມບໍ່ໄດ້ແລ່ນໜີຈາກຄວາມຂັດແຍ້ງນັ້ນ. ລາວມີຄວາມກ້າຫານປະເຊີນໜ້າກັບມັນ, ແລະລາວໄດ້ເຮັດໂດຍຄຶດເຖິງຄວາມສຳພັນກັບຫຼານຊາຍ ໂລດ: "*ເຮົາທັງສອງກໍເປັນພີ່ນ້ອງກັນ...*" (ຂໍ້ 8).

ພວກເຮົາປະເຊີນໜ້າກັບການຕັດສິນໃຈທຸກໆຄັ້ງທີ່ມີຄວາມຂັດແຍ້ງເກີດຂຶ້ນ. ພວກເຮົາບໍ່ສົນໃຈໃນບັນຫານັ້ນ ຫຼືປະເຊີນໜ້າກັບມັນ? ຈົ່ງພາກັນມາເດີນກ້າວໜ້າສູ່ຄວາມສາມັກຄີຖືກຕ້ອງປອງດອງກັນເຖີດ ເພາະວ່າຄວາມກົດດັນແລະ ຄວາມຂັດແຍ້ງ ບໍ່ມີມູນຄ່າລາຄາຫຍັງເລີຍ! ອັບຣາມແລະໂລດ ຫຼານຊາຍໄດ້ເຈລະຈາກັນ, ແລະອັບຣາມໄດ້ປະເຊີນໜ້າກັບບັນຫາ. ໃນເມື່ອເຮັດໂດຍຖືກຕ້ອງ, ການປະເຊີນໜ້າກັນສາມາດສະແດງໃຫ້ຄູ່ຕໍ່ສູ້ໄດ້ເຫັນວ່າພວກເຮົາໃສ່ໃຈຫຼາຍປານໃດ? ມັນສະແດງໃຫ້ເຫັນວ່າຜູ້ນັ້ນ (ຝ່າຍກົງກັນຂ້າມ) ມີຄຸນຄ່າສຳລັບພວກເຮົາຫຼາຍປານໃດ? **ອັບຣາມໄດ້ເປັນຕົວຢ່າງກ່ຽວກັບເລື່ອງນີ້ແກ່ພວກເຮົາທັງຫຼາຍ ໃນຄວາມສຳພັນລະຫວ່າງລາວກັບຫຼານຊາຍ: ໂລດ.**

## 2. ປະຖົມມະການ 12:9-11

*9 ເຮົາແຍກຈາກກັນເສັຽ ຈົ່ງເລືອກເອົາດິນທີ່ເຈົ້າເຫັນຢູ່ຕໍ່ໜ້ານີ້ຕາມເຈົ້າຕ້ອງການ ແລ້ວໜີຈາກຂ້ອຍໄປຖ້າເຈົ້າໄປທາງນຶ່ງ*
*ຂ້ອຍກໍຈະໄປອີກທາງນຶ່ງ." 10 ດັ່ງນັ້ນ ໂລດຈຶ່ງຫຼຽວເບິ່ງທົ່ວໆໄປເຫັນວ່າ ທົ່ງຣາບພຽງຂອງແມ່ນ້ຳຈໍແດນທັງໝົດຈົນເຖິງ*
*ເມືອງໂຊອາ ມີນ້ຳຫຼາຍເໝືອນດັ່ງສວນຂອງພຣະເຈົ້າ ຫຼືເໝືອນດິນປະເທດເອຢິບ (ກ່ອນພຣະເຈົ້າຊົງທຳລາຍເມືອງໂຊໂດມ*
*ແລະເມືອງໂກໂມຣາ ທົ່ງຣາບພຽງນີ້ແມ່ນອຸດົມສົມບູນດີ). 11 ໂລດຈຶ່ງຕັດສິນໃຈເລືອກເອົາທົ່ງຣາບພຽງຂອງແມ່ນ້ຳຈໍແດນທັງ*
*ໝົດເປັນບ່ອນຢູ່ຂອງຕົນ ແລ້ວເຄື່ອນຂະບວນມຸ້ງໜ້າໄປທາງທິດຕາເວັນອອກ ການແຍກກັນຂອງພວກເຂົາທັງສອງເປັນດັ່ງ-*
*ນີ້ແຫລະ.*

ອັບຣາມໄດ້ລົດອຸນຫະພູມຂອງຄວາມກົດດັນລົງໂດຍການສົນທະນາໂອ້ລົມກັບຫຼານຊາຍ: ໂລດ ໂດຍປາສຈາກເປົ້າໝາຍທີ່ຈະເອົາຊະນະການສົນທະນານັ້ນ. ເປົ້າໝາຍຂອງທຸກໆການຂັດແຍ້ງກໍຄື: ບໍ່ແມ່ນວ່າຜູ້ໃດເປັນຜູ້ທີ່ຖືກຕ້ອງ; ແຕ່ມັນຈຳເປັນວ່າ: ຕ້ອງເຮັດໃຫ້ຖືກຕ້ອງ. ເພື່ອຈະເຮັດໃຫ້ສິ່ງໃດສິ່ງນຶ່ງຖືກຕ້ອງ, ພວກເຮົາຈຳເປັນຕ້ອງມີຄວາມປາຖນາໃຫ້ຄົນອື່ນເປັນທີ່ນຶ່ງ(ມີຄວາມສຳຄັນຫຼືມີກຽດກວ່າຕົນເອງ). ອັບຣາມໄດ້ສະແດງອອກໃຫ້ເຫັນຄວາມສຳຄັນທີ່ເອົາຄວາມຈຳເປັນຂອງຄົນອື່ນໃຫ້ຢູ່ເໜືອຄວາມຈຳເປັນຂອງຕົນເອງ. ຫຼັກການທີ່ອັຄສາວົກໂປໂລໄດ້ສອນໄວ້ແຕ່ຫຼາຍສະຕະວັດກ່ອນ: "*ຢ່າເຮັດສິ່ງໃດໃນທາງຊີງດີຫລືຖືດີກັນ ແຕ່ຈົ່ງຖ່ອມໃຈລົງຖືວ່າຄົນອື່ນດີກວ່າຕົນ. ຢ່າໃຫ້ຜູ້ໃດເຫັນແກ່ປະໂຍດຂອງຕົນຝ່າຍດຽວ ແຕ່ຈົ່ງເຫັນແກ່ປະ-ໂຍດຂອງຄົນອື່ນດ້ວຍ. ເຈົ້າທັງຫລາຍຈົ່ງມີນ້ຳໃຈຕໍ່ກັນເໝືອນຢ່າງທີ່ມີໃນພຣະເຢຊູຄຣິດ.*" (ຟລປ 2:2-3). ຈົ່ງພິຈາລະນາເບິ່ງພຣະສັນຍາແລະຕຳແໜ່ງທີ່ພຣະເຈົ້າໄດ້ຊົງມອບໃຫ້ແກ່ອັບຣາມ. ພຣະເຈົ້າໄດ້ຊົງມອບແຜ່ນດິນຂອງພຣະອົງໃຫ້ແກ່ລາວ! ອັບຣາມບໍ່ຈຳເປັນຕ້ອງໃຫ້ແກ່ ໂລດ ຂໍ້ສເນີດັ່ງກ່າວ. ລາວສາມາດບອກ ໂລດໃຫ້ເອົາຕ່ອນດິນທີ່ຂີ້ຮ້າຍທີ່ສຸດ, ແລະການເຮັດ

ດັ່ງນັ້ນຍັງເປັນການສະແດງອອກເຖິງພຣະຄຸນ(ພຣະພອນອັນປະເສີດ). ທີ່ສຳຄັນທີ່ສຸດຄື, ພຣະເຈົ້າໄດ້ຊົງມອບທີ່ດິນໃຫ້ແກ່ອັບຣາມ, ສະນັ້ນອັບຣາມສາມາດເວົ້າໄດ້ວ່າ: "ມັນເຖິງເວລາແລ້ວທີ່ເຈົ້າແລະຄົນລ້ຽງສັດທີ່ຜິດຖຽງກັນຂອງເຈົ້າອອກໄປຈາກຊັບສິນກັມສິດຂອງຂ້ອຍ". ອັບຣາມໄດ້ລົດອຸນຫະພູມຂອງຄວາມກົດດັນລົງ ໂດຍການຍົກລະດັບຂອງຄວາມຖ່ອມໃຈຖ່ອມກາຍຂອງລາວໃຫ້ສູງຂຶ້ນ, ໂດຍການຫ້າມປາມກຽດສັກສີ ຫຼື "ສິດທິ" ຂອງລາວເພື່ອຄວບຄຸມສະຖານະການນັ້ນ.

*ທ່ານຊາບຊຶ້ງກັບວິທີການທີ່ອັບຣາມແລະໂລດແກ້ໄຂຂໍ້ຂັດແຍ້ງຂອງເຂົາເຈົ້າຢ່າງໃດ?*

ເຊັ່ນດຽວກັບອັບຣາມຜູ້ຖ່ອມໃຈຖ່ອມກາຍ, ພຣະເຢຊູຊົງເປັນຜູ້ສືບເຊື້ອສາຍຂອງເພິ່ນໄດ້ຊົງເປັນແບບຢ່າງຂອງຄວາມຖ່ອມໃຈຖ່ອມກາຍທີ່ຍິ່ງໃຫຍ່ທີ່ສຸດ. ພຣະເຢຊູຊົງເຕັມພຣະທັຍ ແລະຊົງຍິນດີໄດ້ສລະພຣະຊົນຂອງພຣະອົງເພື່ອພວກເຮົາໂດຍໄດ້ຊົງຮັບເອົາຄວາມຕາຍທີ່ພວກເຮົາສົມຄວນໄດ້ຮັບມາເປັນຂອງພຣະອົງເອງ. ໃນຖານະເປັນຜູ້ຕິດຕາມພຣະເຢຊູ, ພວກເຮົາຕ້ອງເພິ່ງພາໃນຕົວຢ່າງຂອງພຣະອົງແລະປະຕິບັດຄວາມຖ່ອມໃຈຖ່ອມກາຍນັ້ນ. **ນີ້ແມ່ນບົດຮຽນທີ່ພວກເຮົາຈຳເປັນຕ້ອງຮຽນຮູ້ຢູ່ທຸກໆວັນ**, ແຕ່ມັນເປັນບົດຮຽນ-ຫຼັກການ-ທີ່ຄຸ້ມຄ່າທີ່ຈະຕໍ່ສູ້ເອົາມາ. ເມື່ອພວກເຮົາເຮັດແນວນັ້ນ, ຄວາມຂັດແຍ້ງຫຼາຍຢ່າງສາມາດຫຼີກລ້ຽງໄດ້ທັງໝົດ ແລະຄວາມສຳພັນທະພາບສາມາດຖືກຟື້ນຟູຄືນມາໄດ້.

## 3. ປະຖົມມະການ 13:14-18

*14 ຫຼັງຈາກໂລດໄດ້ໜີໄປແລ້ວ ພຣະຜູ້ເປັນເຈົ້າຊົງກ່າວກັບອັບຣາມວ່າ, "ຕັ້ງແຕ່ບ່ອນເຈົ້າຢືນຢູ່ນີ້ ຈົ່ງເບິ່ງໄປທົ່ວທຸກທິດໃຫ້ດີ. 15 ດິນທຸກໆບ່ອນທີ່ເຈົ້າແນມເຫັນຢູ່ນີ້ ເຮົາຈະໃຫ້ເຈົ້າ ແລະເຊື້ອສາຍຂອງເຈົ້າຢູ່ສືບໆໄປເປັນນິດ. 16 ເຮົາຈະເຮັດໃຫ້ເຊື້ອ-ສາຍຂອງເຈົ້າເພີ່ມທະວີຫລາຍຂຶ້ນດັ່ງຝຸ່ນດິນ ຖ້າຜູ້ໃດນັບຂີ້ຝຸ່ນດິນໃນໂລກນີ້ໄດ້ ຈຶ່ງຈະສາມາດນັບເຊື້ອສາຍຂອງເຈົ້າໄດ້."*
*17 "ບັດນີ້ ຈົ່ງລຸກຂຶ້ນແລ້ວອອກເດີນທາງໄປທົ່ວດິນແດນນີ້ເພາະວ່າເຮົາຈະໃຫ້ດິນແດນຕອນນີ້ແກ່ເຈົ້າ." 18 ດັ່ງນັ້ນ ອັບຣາມ ຈຶ່ງຍົກຍ້າຍຂະບວນໄປຕັ້ງຢູ່ໃກ້ໆກັບຕົ້ນໄມ້ ສັກສິດຂອງມາມເຣ ທີ່ເມືອງເຮັບໂຣນ ໃນທີ່ນັ້ນເພິ່ນໄດ້ສ້າງແທ່ນບູຊາຖວາຍແກ່ພຣະຜູ້ເປັນເຈົ້າ.*

ເປັນໜ້າໂສກເສົ້າສຳລັບ ໂລດ, ລາວໄດ້ຕັດສິນໃຈໄປໃນທາງທີ່ຜິດ. ລາວອາດຄິດວ່າລາວໄດ້ດິນແດນທີ່ດີກວ່າ, ແຕ່ການຕັດສິນໃຈຂອງລາວພາໃຫ້ລາວໄດ້ຍ້າຍໜີຫ່າງໄກຈາກລຸງຂອງລາວ-ຊຶ່ງພຣະເຈົ້າໄດ້ຊົງໃຫ້ພຣະພອນ-ແລະມຸ່ງໜ້າເຂົ້າສູ່ດິນແດນທີ່ອາດບໍ່ສງົບ. ລາວໄດ້ເລືອກເອົາດິນແດນນອກເຂດຂອງການາອານ (ດິນແດນແຫ່ງພັນທະສັນຍາ) ທີ່ພຣະເຈົ້າໄດ້ມອບໃຫ້ແກ່ອັບຣາມ. ໂລດໄດ້ "ກາງເຕັນຂຶ້ນໃກ້ກັບເມືອງໂຊໂດມ" (ຂໍ້ 12), ແລະທ້າຍທີ່ສຸດພວກເຮົາເຫັນລາວ "ນັ່ງຢູ່ທີ່ປະຕູເມືອງໂຊໂດມ" (ຂໍ້ ປຖກ 19:1).

*ເມື່ອໃດທີ່ພຣະເຈົ້າໄດ້ຊົງພິສູດໃຫ້ທ່ານເຫັນ ວ່າພຣະອົງຈະຊົງດູແລເບິ່ງແຍງທ່ານ?*

ຢ່າງໃດກໍ່ຕາມ, ອັບຣາມຢູ່ສະຖານທີ່ຊຶ່ງລາວເຄີຍໄດ້ຢູ່ມາແລ້ວນັ້ນ ແລະຮັກສາຄວາມໄວ້ວາງໃຈໃນພຣະເຈົ້າ. ພຣະເຈົ້າໄດ້ຊົງເຕືອນອັບຣາມກ່ຽວກັບປະຊາກອນຂອງພຣະອົງ-**ພຣະສັນຍາທີ່ບໍ່ຊົງປ່ຽນແປງ**. ພຣະເຈົ້າຊົງຮັກສາຄຳສັນຍາຂອງພຣະອົງຕໍ່ພວກເຮົາ, ແຕ່ເວລາຂອງພຣະອົງບໍ່ແມ່ນຈະກົງກັບແຜນການ (ຕາຕລາງ) ຂອງພວກເຮົາສເມີໄປ: ພວກເຮົາໄວ້ວາງໃຈໃນການຊົງທຳງານຂອງພຣະອົງ ແລະ ພວກເຮົາໄວ້ວາງໃຈໃນວັນເວລາທຳງານຂອງພຣະອົງ. ຕາມປົກຕິແລ້ວ, ພວກເຮົາຕ້ອງການຄຳຕອບໄວໆ; ແຕ່ວ່າທຸກຄຳຕອບຕ້ອງແມ່ນສອງຝ່າຍນຳກັນ(ຜູ້ນຶ່ງຖາມ-ຜູ້ນຶ່ງຕອບ). ພວກເຮົາຈຳເປັນຕ້ອງອະທິຖານ ແລະທູນຂໍຕໍ່ພຣະເຈົ້າໃຫ້ຊົງທຳງານໃນຫົວໃຈຂອງບຸກຄົນອື່ນ. ພວກເຮົາຈຳເປັນຕ້ອງພ້ອມທີ່ຈະຮັບມືກັບຄວາມກົດດັນ

ລະຫວ່າງເວລາຂອງພຣະອົງ ແລະ ເວລາຂອງພວກເຮົາ.

ໃນຂນະທີ່ພວກເຮົາບໍ່ສາມາດຄວບຄຸມການໄກ່ເກັ່ງຄືນດີກັນ, ພວກເຮົາສາມາດໃຫ້ອະພັຍ. ການໃຫ້ອະພັຍແກ່ຄົນອື່ນອາດຈະເປັນການຍາກ, ແຕ່ວ່າມັນເປັນການປິ່ນປົວພະຍາບານທີ່ດີທີ່ສຸດ. ມັນຈຳເປັນຕ້ອງເອົາທັງສອງຝ່າຍເພື່ອໃຫ້ການໄກ່ເກັ່ງຄືນດີກັນເກີດຂຶ້ນ, ແຕ່ພວກເຮົາຍັງສາມາດໃຫ້ອະພັຍໂດຍບໍ່ຄຳນຶງເຖິງວ່າບຸກຄົນນັ້ນ(ຝ່າຍກົງກັນຂ້າມ)ຈະໂຕ້ຕອບດ້ວຍວິທີໃດກໍ່ຕາມ. ຈົ່ງໃຫ້ອະພັຍແລະໄວ້ວາງໃຈໃນພຣະເຈົ້າໃນການຊົງທຳງານໃນຈິດໃຈຄົນອື່ນ. ປຽບດັ່ງອັບຣາມ, ພວກເຮົາຈຳເປັນຕ້ອງສງວນຮັກສາທ່າທີແຫ່ງການນະມັສການ ເຖິງແມ່ນວ່າສະຖານະການທີ່ຍຸ້ງຍາກນັ້ນໄດ້ຖືກແກ້ໄຂໄປແລ້ວຫຼືບໍ່ກໍຕາມ. ທ່າທີແຫ່ງການນະມັສການພາໃຫ້ພວກເຮົາຮັກສາໄວ້ **ໃນການເພິ່ງພາໃນອົງພຣະຄຣິດ** ແລະ **ໃຫ້ພວກເຮົາມີຄວາມໝັ້ນໃຈໃນຖ້າມກາງຄວາມຂັດແຍ້ງ**.

*ການໄວ້ວາງໃຈໃນພຣະເຈົ້າຈະຊ່ວຍພວກເຮົາໃນຍາມທີ່ມີຄວາມຂັດແຍ້ງໄດ້ດ້ວຍວິທີໃດ?*

## ນຳໃຊ້ໃນຊີວິດ

ພວກເຮົາຈຳເປັນຕ້ອງໄວ້ວາງໃຈໃນພຣະເຈົ້າໃນເມື່ອຄວາມຂັດແຍ້ງຂັດຂວາງຄວາມສັມພັນຂອງພວກເຮົາ. ຈົ່ງເລືອກເອົານຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງອະທິຖານ.** ໃນຂນະທີ່ທ່ານນະມັສການ, ຈົ່ງອະທິຖານເພື່ອບັນດາຜູ້ທີ່ທ່ານມີຄວາມຕຶງຄຽດດ້ານຄວາມສັມພັນກັບພວກເຂົາເຈົ້າໃນຂນະນີ້. ໃນຂນະທີ່ທ່ານອະທິຖານ, ຄວາມຕຶງຄຽດໃນອະດີດອາດກັບມາປາກົດຢູ່ຕໍ່ໜ້າຈິດໃຈຂອງທ່ານ. ຈົ່ງອະທິຖານເພື່ອບັນດາຄົນຈຳພວກນັ້ນເຊັ່ນດຽວກັນ.
- **ຈົ່ງກວດເບິ່ງກຽດສັກສີຂອງທ່ານ.** ເພື່ອເປັນການປຽບທຽບກັບອົງພຣະເຢຊູ, ລະດັບຂອງຄວາມຖ່ອມກາຍ ຖ່ອມໃຈຂອງທ່ານນັ້ນແມ່ນສູງຕ່ຳພຽງໃດ? ຈົ່ງໄປຫາພຣະເຈົ້າແລະທູນຖາມໃຫ້ພຣະອົງຊົງໄດ້ເປີດເຜີຍກຽດສັກສີຂອງທ່ານວ່າ: ມັນກຳລັງຈະເອົາສ່ວນທີ່ດີທີ່ສຸດຂອງທ່ານໄປໄວ້ໃສ?
- **ຈົ່ງຄືນດີກັນ.** ແມ່ນໃຜເປັນຜູ້ທີ່ທ່ານຈຳເປັນຕ້ອງຄືນດີກັບຜູ້ນັ້ນ? ຈົ່ງຈັບໂທຣະສັບ, ເຮັດໝາຍນັດພົບ, ແລະໃຫ້ມີການສົນທະນາເຣື່ອງຍຸ່ງຍາກ ກ່ຽວກັບການບໍ່ຖືກຕ້ອງປອງດອງໃນຄວາມສັມພັນນັ້ນ.

ການຈັດການກັບຄວາມກົດດັນໃນຊີວິດຂອງພວກເຮົາເປັນສິ່ງທີ່ທ້າທາຍ, ຢ່າງນ້ອຍທີ່ສຸດກໍຄືຄວາມກົດດັນທີ່ກ່ຽວພັນກັບຄວາມສຳພັນທະພາບ. **ແຕ່ວ່າພຣະເຈົ້າໄດ້ຊົງສຳແດງໃຫ້ພວກເຮົາໄດ້ເຫັນວິຖີທາງເດີນໜ້າ-ເຖິງແມ່ນວ່າຈະເປັນ ຄວາມສຳພັນຊຶ່ງທ້າທາຍທີ່ສຸດກໍຕາມ**. *ພວກເຮົາສາມາດໄວ້ວາງໃຈໃນພຣະອົງໃນຂນະທີ່ພວກເຮົາ ກຳລັງໃຫ້ອະພັຍແລະສແວງຫາການຖືກຕ້ອງປອງດອງຄືນດີຕໍ່ກັນແລະກັນ.*

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ https://ulsb.org/sunday-school-2/ ແປໂດຍ SSK**